# ບົດທີ 1

# ການແຍກແຕ່ລະໄລຍະຊ່ວງປີທີ່ມີຊື່ສຽງ

ມື້ນີ້ພວກເຮົາຈະມາຄິດພິຈາລະນາເບິ່ງວິທີສຶກສາຮ່ຳຮຽນພະຄຳພີ ແບບໃໝ່ຄື: ການແຍກແຕ່ລະພາກຂອງພະຄຳພີ ໃນໄລຍະປີທີ່ມີຊື່ສຽງດີນັ້ນ. ການແຍກແຕ່ລະພາກເປັນວິທີໜຶ່ງທີ່ເຮົາສາມາດເຂົ້າໃຈແຈ້ງຂຶ້ນຕື່ມໃນຊ່ວງໄລຍະປີທີ່ມີຊື່ ສຽງ. ຖ້າທ່ານຮຽນຈົບ ບົດທີ 1 ນີ້ ເຮົາຈະສາມາດແຍກແຕ່ລະພາກສ່ວນຂອງຊ່ວງໄລຍະສະໄໝປີທີ່ມີຊື່ສຽງດີຂອງພະເຢຊູ ໄດ້ເປັນແຕ່ລະຫົວເລື່ອງ ແລະເຂົ້າໃຈເນື້ອຄວາມດ້ວຍ.

ກ່ອນຈະເລີ້ມຕົ້ນຮຽນບົດນີ້ຂໍໃຫ້ເບິ່ງຮູບພາບແລະອ່ານເລື່ອງຕາມຮູບພາບນັ້ນ.

## ການວິເຄາະປີທີ່ ພະເຢຊູ ມີຊື່ສຽງດີ

| ສ່ວນໃນອານາຈັກ | ບົດແລະຂໍ້ພະຄຳພີ | ຫົວເລື່ອງ | ຮູບສະແດງ |
|---|---|---|---|
| ການແຜ່ຂະຫຍາຍອອກໄປຂອງອານາຈັກ | ---------- | ພະເຢຊູຊົງ ---------------------- ປະກາດໃນແຂວງ ---------------------- |   |
| ກິດລະບຽບຂອງອານາຈັກ | ---------- | ພະເຢຊູເທດສະໜາຢູ່ ---------------------- |   |
| ຫຼັກຖານຂອງອານາຈັກ | ---------- | ພະອົງກະທຳການ ---------------------- |   |
| ຜູ້ຕາງໜ້າຂອງອານາຈັກ | ---------- | ຊົງເອີ້ນເອົາ ---------------------- |   |
| ສັດຕູຂອງອານາຈັກ | ---------- | ມີຜູ້ມາ ---------------- ---------- ພະອົງ |   |
| ຕົວຢ່າງຂອງອານາຈັກ | ---------- | ພະອົງຍົກຄຳ ---------------------- |   |

ກ່ອນຈະເລີ້ມຕົ້ນຮຽນຂໍໃຫ້ທ່ານອ້ອນວອນຂໍສະຕິປັນຍາຈາກພະເຈົ້າເພື່ອຄວາມເຂົ້າອົກເຂົ້າໃຈໃນບົດຮຽນນີ້!

1 ໃຫ້ເຮົາເລີ້ມຕົ້ນໃຊ້ວິທີຮຽນແຍກແຕ່ລະພາກສ່ວນເພາະເປັນການແບ່ງຫຼືຫານອັນໃດໜຶ່ງ ຕົວຢ່າງ: ໃນຮູບຕໍ່ໄປນີ້ ເຮົາແບ່ງໂຕມ້າໄດ້ເປັນສາມສ່ວນ.




ກ. ຕາມວິທີແຍກແຕ່ລະພາກນີ້ ເຮົາແບ່ງໂຕມ້າໄດ້ເປັນຈັກສ່ວນ? ____________________

ຂ. ເຮົາແບ່ງໂຕມ້າໄດ້ເປັນສາມສ່ວນດ້ວຍວິທີໃດ? ______________________________

2 ແຕ່ບົດຮຽນກ່ອນໆ ທ່ານໄດ້ຮຽນເລື່ອງຊີວິດຂອງ ພະເຢຊູ ມາ5 ສະໄໝຄື ສະໄໝໃດແດ່?

ກ. ____________________________________________________________

ຂ. ____________________________________________________________

ຄ. ____________________________________________________________

ງ. ____________________________________________________________

ຈ. ____________________________________________________________

ເມື່ອເຮົາໄດ້ຮຽນຊີວິດພະເຢຊູ ເຮົາໄດ້ແຍກແຕ່ລະພາກມາແລ້ວແມ່ນບໍ?

3 ເຮົາແບ່ງໂຕມ້າມາເປັນສາມສ່ວນ ແຕ່ເຮົາກໍ່ສາມາດແຍກຊີວິດ ພະເຢຊູໄດ້ເປັນ 5 ສະໄໝໄດ້ຄືກັນ. ເຮົາສາມາດ ແບ່ງ ມ້າມາແລ້ວເປັນສາມສ່ວນແລະເຮົາກໍ່ສາມາດແຍກແຕ່ລະສ່ວນນັ້ນລະອຽດອອກເປັນ ຫຼາຍໆ ອັນອີກ

ເຊັ່ນ: ສ່ວນຫົວເຮົາຍັງແຍກໄດ້ອີກວ່າ ມີ ຫູ ຕາ ດັງ ປາກ ໆລໆ

ເຊັ່ນດຽວກັນໃນສະໄໝປີຕຽມຕົວຂອງ ພະເຢຊູ ເຮົາຍັງສາມາດແຍກເປັນຫຼາຍໆສ່ວນໄດ້ອີກ ເຊັ່ນດຽວກັບແຕ່ລະສ່ວນຂອງ ມ້າ ນັ້ນ.

ເຫຼັ້ມທີ 2 ທ່ານໄດ້ຮຽນມາແລ້ວ ໃນສະໄໝປີຕຽມຕົວຂອງ ພະເຢຊູ ສະໄໝນີ້ປະກອບດ້ວຍສາມສ່ວນ. ຂໍໃຫ້ທ່ານສະເໜີຫົວເລື່ອງ ສາມ ສ່ວນເຫຼົ່ານັ້ນ?

ກ. ຄຳເທດສະໜາຂອງໂຢຮັນບັບຕິສະໂຕ ມັດທາຍ 3:1-12

ຂ. ___________________________ ມທ 3:13-17

ຄ. ___________________________ ມທ 4:1-11



ໃນເຫຼັ້ມທີ 3 ນີ້ເຮົາຈະຮຽນເລື່ອງສະໄໝພະເຢຊູມີຊື່ສຽງດີ. ເຮົາຈະແຍກສະໄໝນີ້ມາເປັນ 6 ສ່ວນ.

**4** ຖ້າເຮົາຖືວ່າສະໄໝພະເຢຊູ ມີຊື່ສຽງດີນັ້ນ ປຽບກັບເຊືອກເສັ້ນໃຫຍ່ແລະໃນເຊືອກນັ້ນປະກອບດ້ວຍ 6 ເສັ້ນນ້ອຍ ຝັ້ນກ້ຽວກັນຢູ່ຄືສະໄໝພະເຢຊູ ມີຊື່ສຽງດີປະກອບດ້ວຍ 6 ຢ່າງ ຫຼື 6 ສ່ວນຂອງອານາຈັກ.




ສະໄໝພະເຢຊູ ຊື່ສຽງດີປະກອບດ້ວຍຈັກສ່ວນຂອງອານາຈັກ? ____________________

ສະໄໝຊື່ສຽງດີຂອງ ພະເຢຊູ ມີ 6 ສ່ວນປະກອບເຮົາຈະຮຽນແຕ່ລະສ່ວນນັ້ນ ເພື່ອທ່ານຈະໄດ້ເຂົ້າໃຈ ແຕ່ລະສ່ວນຂອງອານາຈັກ



## ສ່ວນທີ 1 ມທ 4:12-25

**5** ຂໍໃຫ້ທ່ານອ່ານ ມທ 4:12 ພະເຢຊູຕັ້ງຕົ້ນປ່າວປະກາດໃນແຂວງໃດ? _______________

**6** ໃຫ້ອ່ານຂໍ້ 23 ໃນ ມທ 4:12-25 ທ່ານເຫັນວ່າສະໄໝຊື່ສຽງດີພະອົງຕັ້ງຕົ້ນປະກາດໃນແຂວງໃດ? ໃຫ້ ເລືອກເອົາຂໍ້ທີ່ເຫັນວ່າຖືກ.

ກ. ພະເຢຊູ ຊົງເອີ້ນເອົາສາວົກສີ່ຄົນ.

ຂ. ພະອົງເທດສະໜາຢູ່ຈ້າຍພູ.

ຄ. ພະເຢຊູ ຊົງຕັ້ງຕົ້ນປ່າວປະກາດໃນແຂວງ ຄາລີເລ.

ງ. ພະເຢຊູ ຊົງໂຜດປວງຊົນໃຫ້ດີພະຍາດ.

**7** ເຖິງວ່າສະໄໝນີ້ ພະອົງປ່າວປະກາດໃນ ຄາລີເລສ່ວນຫຼາຍກໍ່ຕາມແຕ່ຊື່ຂອງ ພະເຢຊູ ຊ່າລືໄປນອກຈາກແຂວງ ນັ້ນດ້ວຍ. ໃນ ມທ 4:24-25 ເປັນສະຖານທີ່ມີຊື່ສຽງດີ ສີ່ ບ່ອນນອກຈາກຄາລີເລ. ຂໍໃຫ້ທ່ານຈົດ ສີ່ ບ່ອນນັ້ນໄວ້.

ກ. ____________________________________________________________

ຂ. ____________________________________________________________

ຄ. ____________________________________________________________

ງ. ________________________________________________________ ຟາກນັ້ນ.

**8** ກິດຕິສັບຂອງ ພະເຢຊູ ຊ່າລືໄປຫຼາຍປານນັ້ນແຫຼະ! ໃນ ສີ່ບ່ອນນັ້ນແມ່ນບ່ອນໃດ ທີ່...

ກ. ແມ່ນແຂວງທີ່ບໍ່ຢູ່ໃຕ້ການປົກຄອງຂອງ ເຮໂລດ? ___________________________

ຂ. ເປັນອີກປະເທດໜຶ່ງຕ່າງຫາກ? ________________________________________

ຄ. ເປັນເມືອງຫຼວງຂອງປະເທດ ປາແລັດສະຕິນ? ____________________________

ງ. ຢູ່ຟາກແມ່ນ້ຳຢໍດາເນ ນັ້ນແມ່ນແຂວງໃດ? ____________________________

**9** ເອົາລະ! ປານນີ້ທ່ານອາດຈະຈື່ເນື້ອຄວາມໃນ ມທ 4:12-25 ໄດ້ຄື: " ພະອົງຕັ້ງຕົ້ນປ່າວປະກາດໃນແຂວງຄາລີ ເລ " ຕອນພະຄຳພີນີ້ ມີສ່ວນສະເພາະໃນອານາຈັກອີກດ້ວຍໃຫ້ທ່ານສັງເກດ ສ່ວນຂອງອານາຈັກ 3 ປະການດັ່ງຕໍ່ໄປນີ້ຄື:

ສັດຕູຂອງອານາຈັກ

ການຂະຫຍາຍຂອງ ອານາຈັກ

ກົດລະບຽບຂອງອານາຈັກ

ໃນ3 ຫົວເລື່ອງສ່ວນໃນອານາຈັກນັ້ນແມ່ນສ່ວນໃດທີ່ຖືກກັບ ມທ 4:12-15 ____________

ສະໄໝປີທີ່ມີຊື່ສຽງດີຂອງ ພະເຢຊູ ມີ 6 ສ່ວນຂອງອານາຈັກ ເຊິ່ງມີດັ່ງຕໍ່ໄປນີ້:

| | |
|---|---|
| 1. ການຂະຫຍາຍໄປຂອງອານາຈັກ ຢູ່ໃນ ມທ | ບົດ 4:12-25 |
| 2. ກົດລະບຽບຂອງອານາຈັກ | ບົດ 5, 6 ແລະ 7 |
| 3. ຫຼັກຖານຂອງອານາຈັກ | ບົດ 8 ແລະ 9 |
| 4. ຜູ້ຕາງໜ້າຂອງອານາຈັກ | ບົດ 10 |
| 5. ສັດຕູຂອງອານາຈັກ | ບົດ 11 ແລະ 12 |
| 6. ຕົວຢ່າງຂອງອານາຈັກ | ບົດ 13 |

**10** ແມ່ນເພາະເຫດໃດຈຶ່ງຈັດໃຫ້ແຍກເປັນແຕ່ລະສ່ວນໃນອານາຈັກ?

## ສ່ວນທີ 2. ມທ 5, 6 ແລະ 7

**11** ໃຫ້ທ່ານອ່ານ ມທ 5:1-2 ທ່ານຈະຍົກເອົາຄຳໃດເປັນຫົວເລື່ອງຂອງສ່ວນທີ 2. ໃນສະໄໝປີທີ່ມີຊື່ສຽງດີຂອງພະ ເຢຊູ? ໃຫ້ເລືອກໝາຍເອົາຂໍ້ທີ່ເຫັນວ່າຖືກ.

ກ. ເລື່ອງຄວາມສຸກ.

ຂ. ພະເຢຊູ ໂຜດຄົນທັງປວງໃຫ້ດີພະຍາດ.

ຄ. ພະເຢຊູ ຊົງຕັ້ງຕົ້ນເທດສະໜາຢູ່ຈ້າຍພູ.

**12** ໃຫ້ທ່ານອ່ານ ມທ 7:28-29

ກ. ຄຳເທດສະໜາຢູ່ຈ້າຍພູຈົບລົງດ້ວຍບົດໃດ? ____________________________

ຂ. ຄຳເທດສະໜາຢູ່ຈ້າຍພູນັ້ນປະກອບດ້ວຍຈັກບົດໃນພະຄຳພີ? __________________

ຄ. ບົດໃດແດ່? ____________________________________________________

ງ. ເຮົາເອີ້ນເນື້ອຄວາມຂອງ ມັດທາຍ ບົດ 5, 6 ແລະ 7 ແມ່ນຫຍັງ? ________________

**13** ຫົວເລື່ອງໃນ ມັດທາຍ ບົດ 5-7 ຄື: ຄຳເທດສະໜາຢູ່ຈ້າຍພູ ແຕ່ວ່າຍັງຈະຈັດສ່ວນໃນອານາຈັກອີກ. ປະເທດ ໃດໆທີ່ມີຢູ່ໃນໂລກນີ້ມີກົດໝາຍຫຼືກົດລະບຽບຕ່າງໆ ໃນບົດເທດສະໜາຢູ່ຈ້າຍພູ ພະເຢຊູ ຈັດກົດຂອງອານາຈັກຂອງພະອົງໄວ້ ຂໍໃຫ້ທ່ານອ່ານສາມສ່ວນໃນອານາຈັກຕໍ່ໄປນີ້:

ສັດຕູຂອງອານາຈັກ.

ກົດໝາຍຂອງອານາຈັກ.

ຜູ້ຕາງໜ້າຂອງອານາຈັກ.

ໃນສາມສ່ວນຂ້າງເທິງນັ້ນແມ່ນສ່ວນໃດທີ່ຖືກກັບ ມັດທາຍ ບົດ 5-7? ________________

## ສ່ວນທີ 3. ມທ ບົດ 8 ແລະ 9

**14** ເຮົາຈະເລືອກເອົາຫົວເລື່ອງໃນສອງບົດນີ້. ໃຫ້ທ່ານອ່ານບົດ 8 ແລະ 9 ເພື່ອຈະຮູ້ຈັກແຕ່ລະຕອນຂອງເລື່ອງ ແດ່ຫຼັງຈາກທ່ານໄດ້ອ່ານແລ້ວ ຮູ້ຈັກເນື້ອໃນຂອງແຕ່ລະເລື່ອງນັ້ນເວົ້າເຖິງການສະແດງລິດອຳນາດຕ່າງ ໆ ທ່ານເຫັນວ່າເໝາະສົມຈະຍົກ ປະໂຫຍກໃດມາເປັນຫົວເລື່ອງ? ໃຫ້ໝາຍເອົາຂໍ້ທີ່ຖືກ.

ກ. ພະອົງເຮັດການອັດສະຈັນ. ຂ. ພະອົງເທດສະໜາຢູ່ຈ້າຍພູ.

ຄ. ພະອົງສັ່ງສອນດ້ວຍອຳນາດ.

**15** ນັ້ນແຫຼະ! ມັດທາຍຍົກການອັດສະຈັນຫຼາຍປະການມາລວມໃນ ມັດທາຍ 8 ແລະ 9 ນີ້ຈຶ່ງຈະມາສະແດງຄວາມ ຮັກຂອງພະອົງແລະລັກສະນະຂອງອານາຈັກຂອງພະອົງນັ້ນ. ໃຫ້ທ່ານອ່ານ 3 ສ່ວນໃນອານາຈັກຕໍ່ໄປນີ້:

ຜູ້ຕາງໜ້າອານາຈັກ.

ຫຼັກຖານຂອງອານາຈັກ.

ສັດຕູຂອງອານາຈັກ.

ກ. ສ່ວນໃດທີ່ຖືກກັບ 2 ບົດທີ່ລາຍງານການອັດສະຈັນຫຼາຍປະການນັ້ນ?______________

ຂ. ສອງບົດນັ້ນແມ່ນບົດໃດແດ່? __________________ ແລະ ____________________

**16** ເຮົາໄດ້ຈັດໃຫ້ມີທັງ " ຫົວເລື່ອງ " ແລະ " ສ່ວນໃນອານາຈັກ "ເພື່ອຈະໃຫ້ທ່ານຜູ້ຮຽນຈື່ໄດ້ດີ. ໃນແບບແຜນຕໍ່ໄປ ນີ້ມີຄຳສ່ວນໃນອານາຈັກຂຽນໄວ້ແລ້ວໃຫ້ທ່ານຂຽນຫົວເລື່ອງແລະບົດໃນພະຄຳພີໃສ່ໃຫ້ຖືກຕ້ອງ.

| ສ່ວນໃນອານາຈັກ | ຫົວເລື່ອງ | ບົດແລະຂໍ້ພະທຳ |
|---|---|---|
| ກ. ການຂະຫຍາຍໄປຂອງອານາຈັກ | | |
| ຂ. ກົດໝາຍຂອງອານາຈັກ. | | |
| ຄ. ຫຼັກຖານຂອງອານາຈັກ. | | |

## ສ່ວນທີ 4. ມທ ບົດ 10

**17** ຂໍໃຫ້ທ່ານອ່ານ ມທ 10:1 ຫົວເລື່ອງຂອງ ມັດທາຍ ບົດ 10 ແມ່ນຫຍັງ? ເລືອກເອົາຂໍ້ທີ່ຖືກ.

ກ. ພະເຢຊູ ຊົງຕັ້ງຕົ້ນເທດສະໜາຢູ່ຈ້າຍພູ.

ຂ. ຊົງເອີ້ນເອົາສາວົກສິບສອງຄົນ.

ຄ. ຊົງສົງສານປະຊາຊົນ.

**18** ໃຫ້ທ່ານອ່ານຕໍ່ໄປອີກ

ກ.ໃນເວລານັ້ນພະອົງເອີ້ນເອົາສາວົກຈັກຄົນ? ______________________________

ຂ.ຕາມ ມທ 10:7 ໃນຂະນະພວກທ່ານໄປຈົ່ງປະກາດຫຍັງ? ____________________

**19** ໃນເວລາໃດທີ່ນາຍຍົກລັດທະມົນຕີລາວມີການປະຊຸມໃນຕ່າງປະເທດແຕ່ເພິ່ນເອງໄປບໍ່ໄດ້ ເພິ່ນຕ້ອງໃຫ້ອີກຜູ້ໜຶ່ງໄປແທນຜູ້ນັ້ນເອີ້ນວ່າຜູ້ຕາງໜ້າ. ໃຫ້ທ່ານອ່ານຊື່ຂອງສ່ວນໃນອານາຈັກຕໍ່ໄປນີ້:

ຜູ້ຕາງໜ້າຂອງອານາຈັກ.

ສັດຕູຂອງອານາຈັກ.

ກົບລະບຽບຂອງອານາຈັກ.

ກ. ໃນ 3 ສ່ວນໃນອານາຈັກນັ້ນແມ່ນອັນໃດທີ່ເໝາະກັບມທ ບົດ 10? ______________

ຂ. ຫົວເລື່ອງ ຂອງ ມທ ບົດ 10 ແມ່ນຫຍັງ? ________________________________

ອານາຈັກທີ່ ພະເຢຊູຈະມາຕັ້ງໄວ້ນັ້ນຂະຫຍາຍໄປຫຼາຍແຕ່ວ່າມີສັດຕູຢູ່ດ້ວຍ. ເຮົາຈະຮຽນຮູ້ກ່ຽວກັບສັດຕູ ເຫຼົ່ານັ້ນ ໃນ ມທ ບົດ 11 ແລະ 12

## ສ່ວນທີ 5. ມທ ບົດ 11 ແລະ 12

**20** ຂໍໃຫ້ທ່ານອ່ານຫົວຂໍ້ ມທ ບົດ11 ນັ້ນ. ຫົວຂໍ້ນັ້ນເວົ້າເຖິງລູກສິດຂອງໂຢຮັນມາໄຫວ້ ພະເຢຊູ. ແຕ່ວ່າມີບັນ ຫາປະການ 1 ທີ່ປາກົດມາຄື:

ອ່ານ ມທ 3:13-17 ພະເຢຊູ ຮັບບັບຕິສະມາຈາກໃຜ? __________________________

ໃນໂອກາດນັ້ນ

ທ້ອງຟ້າໄຂອອກ.

ພະວິນຍານລົງມາເໝືອນນົກເຂົາ.

ສຽງຈາກສະຫວັນວ່າ: "ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ..."

ແຕ່ວ່າຕອນນີ້ ໂຢຮັນມາສົງໄສແລ້ວ! ໂຢຮັນກໍ່ເປັນມະນຸດຢູ່ດ້ວຍໃນເວລາເພິ່ນຢູ່ຢ່າງເສລີພາບ. ເພິ່ນອອກໄປປ່າວປະກາດພ້ອມດ້ວຍລູກສິດເພິ່ນຢູ່ແຕ່ດຽວນີ້ພິ່ນຖືກຂັງໄວ້ໃນຄຸກ. ເພິ່ນປະກາດບໍ່ໄດ້ແລ້ວໃນເວລາດຽວທີ່ ພະເຢຊູຊົງໃຊ້ລູກສິດອອກໄປປະກາດສັດຕູປາກົດມາຂັງໂຢຮັນໄວ້ແລ້ວລູກສິດຂອງໂຢຮັນມາແຈ້ງຄວາມສົງໄສນີ້ໃຫ້ ພະເຢຊູ.

**21** ສັດຕູທີ່ຊົງ ໂຢຮັນ ໄວ້ແມ່ນກະສັດໃດ? ____________________________________

**22** ໃນມທ 11:20 ເມືອງຕ່າງໆທີ່ ພະເຢຊູ ກະທຳການອິດທິລິດເປັນຢ່າງໃດ? ____________

**23** ໃນມທ12:14 ພວກໃດຢາກຂ້າພະອົງ? ____________________________________

**24** ນມທ 12:28 ພະເຢຊູຍັງຈະຕໍ່ສູ້ຂັບໄລ່ສັດຕູໃດອີກ? ___________________________

**25** ພາະເຫດເຫຼົ່ານີ້ ທ່ານຈະເລືອກປະໂຫຍກໃດໃສ່ເປັນຊື່ຫົວເລື່ອງ ທີ່ຖືກກັບເນື້ອໃນຂອງ ມທ ບົດ 11 ແລະ 12?

ກ. ມື້ຜູ້ມາຕໍ່ສູ້.

ຂ. ຊົງຕິຕຽນເມືອງຕ່າງໆ.

ຄ. ບັນຫາເລື່ອງວັນສະບາໂຕ.

**26** ມັດທາຍລາຍງານເລື່ອງການຊົງ ໂຢຮັນບັບຕິສະໂຕ ໄວ້ແດ່ການບໍ່ຖິ້ມໃຈເກົ່າເອົາໃນໃໝ່ຂອງ ເມືອງຕ່າງໆແດ່ ແຜນການຂອງ ຟາລິຊາຍທີ່ຈະຂ້າພະອົງແດ່ແລະການຕໍ່ສູ້ຜີອີກດ້ວຍ. ບາດນີ້ ເຮົາຈະສະເໜີອີກ 3 ສ່ວນໃນອານາຈັກດັ່ງນີ້:

ການຂະຫຍາຍໄປຂອງອານາຈັກ.

ຜູ້ຕາງໜ້າຂອງອານາຈັກ.

ສັດຕູຂອງອານາຈັກ.

ກ. ສ່ວນໃນອານາຈັກອັນໃດ ທີ່ຖືກກັບ ມທ ບົດ11 ແລະ 12? ____________________

ຂ. ຫົວເລື່ອງນັ້ນແມ່ນຫຍັງ? ____________________________________________

## ສ່ວນທີ່ 6. ມທ ບົດ 13

**27** ກ. ໃຫ້ທ່ານເບິ່ງຫົວຂໍ້ເລື່ອງຕ່າງໆໃນບົດ13 ນັ້ນ. ໃນຫົວຂໍ້ເຫຼົ່ານັ້ນເຫັນ " ຄຳອຸປະມາ " ຈັກເທື່ອ? ______________________________________________________

ຂ. ເພາະເຫດນັ້ນເຮົາຄວນຈະໃສ່ປະໂຫຍກໃດ ມາເປັນຫົວເລື່ອງ?__________________

**28** ກ. ໃນ ມທ 13:3 ບອກວ່າພະອົງຊົງກ່າວກັບເຂົາຫຼາຍປະການເປັນຄຳຫຍັງ? ___________

ຂ. ໃນ 3 ສ່ວນໃນອານາຈັກຕໍ່ໄປນີ້ ອັນໃດຈະຖືກກັບ ມັດທາຍ ບົດ 13?

________________ ສັດຕູຂອງອານາຈັກ.

________________ ຕົວຢ່າງຂອງອານາຈັກ.

________________ ຜູ້ຕາງໜ້າຂອງອານາຈັກ.

ດີຫຼາຍແລ້ວ! ເຮົາໄດ້ຍົກເອົາ "ສະໄໝຊື່ສຽງດີ" ໃນຊີວິດຂອງ ພະເຢຊູມາແຍກເປັນແຕ່ລະພາກແລ້ວ. ເພື່ອຈະໃຫ້ທ່ານຈື່ຈຳໄວ້ດີໆແລ້ວໃຫ້ທ່ານຂຽນສ່ວນໃນອານາຈັກໄວ້ຕາມບ່ອນເໝາະສົມໃນພະຄຳພີເພື່ອໃຫ້ທ່ານຫາໄດ້ງ່າຍ

**29** ຫົວເລື່ອງທັງ 6 ປະການທີ່ເຮົາຮຽນມາແລ້ວກໍ່ຄື:

ພະອົງກະທຳການອັດສະຈັນ.
ພະເຢຊູ ຊົງຕັ້ງຕົ້ນເທດສະໜາຢູ່ຈ້າຍພູ
ພະເຢຊູ ຊົງຕັ້ງຕົ້ນປ່າວປະກາດໃນແຂວງ ຄາລີເລ.
ພະອົງຍົກຄຳອຸປະມາ.
ມີຜູ້ມາຕໍ່ສູ້.
ຊົງເອີ້ນເອົາສາວົກສິບສອງຄົນ.

ແຕ່ທັງຫົກປະການນັ້ນບໍ່ທັນຈັດຖືກຕາມລະບຽບເຫດການເກີດກ່ອນຫຼືຕາມຫຼັງ. ຕໍ່ໄປນີ້ມີຊື່ສ່ວນໃນອານາຈັກຈົດໄວ້ແລ້ວໃຫ້ທ່ານຂຽນຫົວເລື່ອງ ບົດແລະຂໍ້ພະຄຳພີຢ່າງເປັນລະບຽບຕາມລຳດັບ

| ສ່ວນໃນອານາຈັກ | ຫົວເລື່ອງ | ບົດ ຂໍ້ ພະຄຳພີ |
|---|---|---|
| ກ. ການຂະຫຍາຍໄປຂອງອານາຈັກ | | |
| ຂ. ກົດລະບຽບຂອງອານາຈັກ | | |
| ຄ. ຫຼັກຖານຂອງອານາຈັກ | | |
| ງ. ຜູ້ຕາງໜ້າຂອງອານາຈັກ | | |
| ຈ. ສັດຕູຂອງອານາຈັກ | | |
| ສ. ຕົວຢ່າງຂອງອານາຈັກ | | |

**30** ບາດນີ້ເຮົາຈະລອງເບິ່ງວ່າທ່ານຈະຈື່ໄດ້ໝົດຫຼືບໍ່? ໃຫ້ທ່ານຂຽນຢ່າງເປັນລະບຽບຖືກຕ້ອງຕາມລະດັບທັງ

| ສ່ວນໃນອານາຈັກ | ຫົວເລື່ອງ | ບົດ ຂໍ້ ພະຄຳພີ |
|---|---|---|
| ກ. | | |
| ຂ. | | |
| ຄ. | | |
| ງ. | | |
| ຈ. | | |
| ສ. | | |

*ຢ່າລືມ! ຄັນຖ້າທ່ານມີເຫດທີ່ຈະຈົດສ່ວນໃນອານາຈັກ ຫຼື ຂໍ້ອ້າງອີງ ຫຼື ຢ່າງອື່ນໆທີ່ຈະຊ່ອຍທ່ານ ໃນການເທດສະໜາ ຂຽນເອົາກໍ່ໄດ້ຢູ່.*

**ຄຳຕອບ:**

**1** *ກ. ສາມສ່ວນ. ຂ. ວິທີແຍກແຕ່ລະພາກ.*

**2** *ກ. ສະໄໝໄວເດັກ. ຂ. ສະໄໝໜຸ່ມຕົວ. ຄ. ສະໄໝຊື່ສຽງດີ.*

**3** *ຂ. ພະເຢຊູ ຮັບບັບຕິສະມາ ຄ. ມານທົດລອງ ພະເຢຊູ. ງ. ສະໄໝສຳເລັດ.*
*ຈ. ສະໄໝຄືນຂຶ້ນມາຈາກຕາຍ.*

**4** *6 ສ່ວນ.*

**5** *ຄາລີເລ.*

**6** *ຄ.ຖືກ.*

**7** *ກ. ປະເທດຊີເລຍ. ຂ. ແຂວງເດກາໂປລີ. ຄ. ກຸງເຢລູຊາເລັມ.*
*ງ. ແມ່ນ້ຳ ຢໍດາເນ*

**8** *ກ. ເດກາໂປລີ ຂ. ຊີເລຍ ຄ. ກຸງເຢລູຊາເລັມ ງ. ເປີເລຍ*

**9** *ການຂະຫຍາຍໄປຂອງອານາຈັກ.*

**10** *ເພື່ອໃຫ້ຈື່ຈຳ.*

**11** *ຄ. ຖືກ.*

**12** *ກ. ບົດ 7 ຂ. 3 ບົດ ຄ. ບົດ 5, 6 ແລະ 7 ງ. ຄຳເທດສະໜາຢູ່ຈ້າຍພູ.*

**13** *ກົດ ໝາຍຂອງອານາຈັກ.*

**14** *ກ. ຖືກ.*

**15** *ກ. ຫຼັກຖານຂອງອານາຈັກ. ຂ. ມທ ບົດ 8 ແລະ 9*

**16** *ກ. ພະເຢຊູ ຊົງຕັ້ງຕົນປ່າວປະກາດໃນ ແຂວງ ຄາລີເລ. ມທ 4:12-15*
*ຂ. ພະເຢຊູ ຊົງຕັ້ງຕົນເທດສະໜາຢູ່ຈ້າຍພູ. ມທ ບົດ 5, 6 ແລະ 7*
*ຄ. ພະອົງເຮັດການອັດສະຈັນ ມທ ບົດ 8-9*

**17** *ຂ. ຖືກ.*

**18** *ກ. 12 ຄົນ. ຂ. ຈົ່ງປ່າວປະກາດວ່າລາຊະອານາຈັກສະຫວັນມາໃກ້ແລ້ວ.*

**19** *ກ. ຜູ້ຕາງ ໜ້າຂອງອານາຈັກ. ຂ. ຊົງເອີ້ນເອົາສາວົກສິບສອງຄົນ.*

**20** *ໂຢຮັນບັບຕິສະໂຕ.*

**21** *ເຮໂລດຜູ້ປົກຄອງເມືອງ.*

**22** *ເຂົາບໍ່ຖິ້ມໃຈເກົ່າເອົາໃຈໃໝ່.*

**23** *ຟາລີຊາຍ.*

**24** *ຜີ.*

**25** *ກ. ຖືກ.*

**26** *ກ. ສັດຕູຂອງອານາຈັກ. ຂ. ມີຜູ້ມາຕໍ່ສູ້.*

**27** *ກ. 12ເທື່ອ. ຂ. ພະອົງຍົກຄຳອຸປະມາ.*

**28** *ກ. ຄຳອຸປະມາ. ຂ. ຂ.ຖືກ*

**ຄໍາຕອບ (ຕໍ່):**

| | | |
|---|---|---|
| **29** | *ກ. ພະເຢຊູ ຊົງຕັ້ງຕົນປ່າວປະກາດໃນແຂວງຄາລິເລ.* | *ມທ 4:12-25* |
| | *ຂ. ພະເຢຊູ ຊົງຕັ້ງຕົນເທດສະໜາຢູ່ຈ້າຍພູ.* | *ມທ ບົດ 5, 6 ແລະ 7* |
| | *ຄ. ພະອົງກະທໍາການອັດສະຈັນ.* | *ມທ ບົດ 8 ແລະ 9* |
| | *ງ. ຊົງເອີ້ນເອົາສາວົກສິບສອງຄົນ.* | *ມທ ບົດ 10* |
| | *ຈ. ມີຜູ້ມາຕໍ່ສູ້ພະອົງ.* | *ມທ ບົດ 11 ແລະ 12* |
| | *ສ. ພະອົງຍົກຄໍາອຸປະມາ.* | *ມທ ບົດ 13* |
| **30** | *ກວດເບິ່ງຕາມຄໍາຖາມ 29 ທີ່ທ່ານຕອບແລ້ວ* | |